ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ:40 /ຫກ

ນະຄອນຫຼວງວຽງຈັນ, ວັນທີ:30 ສິງຫາ 2017

ສຳນັກງານ ຄດຊ
ເລກ 940
ວັນທີ 01 SEP 2017
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 14-18/08/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,20% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາດີ ເປັນຕົ້ນແມ່ນຕົວເລກຈຳນວນຜູ້ຂໍສະຫວັດດີການຫວ່າງງານ ຫຼຸດລົງເປັນ 232.000 ຄົນ ຂອງອາທິດທີ 12/08/2017 ຈາກ 244.000 ຄົນ ໃນອາທິດຜ່ານມາ ແລະ ຕົວເລກຍອດຂາຍສິນຄ້າຍ່ອຍຂອງເດືອນ 07/2017 ເພີ່ມຂຶ້ນ ມາຢູ່ທີ່ 0,60% ຈາກ 0,30% ໃນເດືອນຜ່ານມາ[1].

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 07-11/08/2017 | ອາທິດນີ້ 14-18/08/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1756 | 1,1733 | 0,20% |
| ເຢນ/ໂດລາ | 109,06 | 109,13 | -0,06% |
| ບາດ/ໂດລາ | 33,22 | 33,21 | 0,03% |
| ເປໂຊ/ໂດລາ | 50,98 | 51,49 | -0,99% |
| ຣູເປັຍ/ໂດລາ | 13.355 | 13.361 | -0,04% |
| ໂດລາສິງກະໂປ/ໂດລາ | 1,3642 | 1,3641 | 0,01% |
| ຢວນ/ໂດລາ | 6,6655 | 6,6715 | -0,09% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 1,91% ຈາກ 48,18 ໂດລາ/ບາເຣວ ມາເປັນ 47,26 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຊົມໃຊ້ນ້ຳມັນຂອງສະຫະລັດຫຼຸດລົງ ຊຶ່ງເຫັນໄດ້ຈາກຄັງສຳຮອງນ້ຳມັນກາຊວນຂອງສະຫະລັດອາເມລິກາ ເພີ່ມຂຶ້ນ 0,70 ລ້ານບາເຣວ ຂອງອາທິດທີ 11/08/2017;

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

- ສຳລັບລາຄາຄຳເພີ່ມຂຶ້ນ 0,57% ຈາກ 1.287,72 ໂດລາ/ອອນ ມາເປັນ 1.295,10 ໂດລາ/ອອນ ເນື່ອງຈາກນັກລົງທຶນເຂົ້າຊື້ສັນຍາຊື້-ຂາຍຄຳ ເພີ່ມຂຶ້ນ ເພື່ອປ້ອງກັນຄວາມສ່ຽງຈາກຄວາມຜັນຜວນຂອງຄ່າເງິນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າ 0,12% ແຕ່ ອ່ອນຄ່າ 0,04% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 0,24% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 7,06% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 07-11/08/2017 | | | ອາທິດນີ້ 14-18/08/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[2] | | | | | | | | | | | | |
| ໂດລາ | 8.345,86 | 8.391,48 | 8.365,89 | 8.343,91 | 8.373,96 | 8.355,84 | 0,02% | 0,21% | 0,12% | -0,33% | -0,23% | -0,24% |
| ບາດ | 250,98 | 252,84 | 252,31 | 251,59 | 252,80 | 252,41 | -0,25% | 0,02% | -0,04% | -7,16% | -7,00% | -7,06% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 2,03% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 29,49%;
- ປະລິມານເງິນ M2 ຫຼຸດລົງ 0,15% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19,39%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (11-17/08/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 38,55 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 73,73 ລ້ານໂດລາ ແລະ ຂາຍໂດລາໄດ້ 35,18 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.311,33 ລ້ານບາດ (ໃນນີ້ ຊື້ບາດໄດ້ 582,54 ລ້ານບາດ ແລະ ຂາຍບາດໄດ້ 1.893,87 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາເພີ່ມຂຶ້ນ 16,51% ແລະ ເງິນບາດເພີ່ມຂຶ້ນ 39,49%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 2,69 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 68 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1,92 ລ້ານໂດລາສະຫະລັດ ແລະ ເງິນບາດຈຳນວນ 46,13 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ເງິນໂດລາສຸດທິ ຈຳນວນ 60,34 ລ້ານໂດລາ ແຕ່ເງິນບາດບໍ່ມີການເຄື່ອນໄຫວ.

[2] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 04-10/08/2017 | | ອາທິດທີ 04-10/08/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **50,22** | **329,01** | **73,73** | **582,54** | **46,81%** | **77,06%** |
| - ທ/ຄທຸລະກິດລັດ | 8,19 | 216,19 | 12,85 | 89,37 | 56,90% | -58,66% |
| - ທ/ຄທຸລະກິດອື່ນໆ | 42,03 | 112,82 | 60,88 | 493,17 | 44,85% | 337,13% |
| **2. ການຂາຍເງິນຕາຕ່າງປະເທດ** | **43,26** | **1.446,35** | **35,18** | **1.893,87** | **-18,68%** | **30,94%** |
| - ທ/ຄທຸລະກິດລັດ | 12,74 | 92,73 | 7,50 | 283,50 | -41,13% | 205,73% |
| - ທ/ຄທຸລະກິດອື່ນໆ | 30,52 | 1.353,62 | 27,68 | 1.610,37 | -9,31% | 18,97% |
| **ຊື້-ຂາຍສຸດທິ ທທກ** | **6,96** | **-1.117,34** | **38,55** | **-1.311,33** | **453,88%** | **17,36%** |
| - ຜິດດ່ຽງ ຊື້-ຂາຍ | 13,86% | -339,61% | 52,29% | -225,11% | 277,27% | -33,72% |
| - ມູນຄ່າການຊື້-ຂາຍ | **93,48** | **1.775,36** | **108,91** | **2.476,41** | **16,51%** | **39,49%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-13,77** | **98,50** | **-2,69** | **-68,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 174,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 13,77 | 75,50 | 2,69 | 68,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **1,81** | **13,90** | **1,92** | **46,13** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,56** | **0,00** | **60,34** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,49 | 0,00 | 60,34 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 08/2017 ຄາດວ່າຈະຢູ່ໃນລະດັບ 0,11% ເພີ່ມຂຶ້ນຈາກ -0,03% ໃນເດືອນ 07/2017.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ເພີ່ມຂຶ້ນ 276,6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 141,26 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 36,2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 95,94 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 945 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 133 ສະບັບ ເທົ່າກັບ 16,37% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 548,45 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 142,34 ຕື້ກີບ ເທົ່າກັບ 35,04% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (11-17/08/2017) ມີທັງໝົດ 3.107 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.020 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 246,70 ຕື້ກີບ ຈາກ 704,22 ຕື້ກີບ ມາເປັນ 950,92 ຕື້ກີບ ເທົ່າກັບ 35,03%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 87 ຄັ້ງ, ມູນຄ່າການໂອນໃນອາທິດ ເພີ່ມຂຶ້ນ 7,05 ຕື້ກີບ ຈາກ 97,06 ຕື້ກີບ ມາເປັນ 104,11 ຕື້ກີບ ເທົ່າກັບ 7,26%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.020,27 ຈຸດ ເພີ່ມຂຶ້ນ 0,12% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 332.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,70 ຕື້ກີບ ເພີ່ມຂຶ້ນ 112,19% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 54,33% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 07-11/08/2017 | ດັດຊະນີອາທິດທີ 07-11/08/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.019,05 | 1.020,27 | 0,12 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 120.900 | 643.680.000 | 5.324 | 296.700 | 1.574.325.000 | 5.306 | 145,41 | 144,58 | -18 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 30.700 | 155.845.000 | 5.076 | 21.100 | 114.905.000 | 5.446 | -31,27 | -26,27 | 369 |
| ບໍລິສັດລາວເວີນ ມະຫາຊົນ | - | - | 7.600 | 600 | 4.550.000 | 7.600 | - | - | - |
| ບໍລິສັດປີໂຕລຽມເທຣດດິ້ງລາວ ມະຫາຊົນ | - | - | 2.000 | 2.200 | 4.400.000 | 2.000 | - | - | - |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 1.300 | 3.770.000 | 2.900 | 2.100 | 6.300.000 | 3.000 | 61,54 | 67,11 | 100 |
| ທັງໝົດ | 152.900 | 803.295.000 | 5.254 | 322.700 | 1.704.480.000 | 5.282 | 111,05 | 112,19 | |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຈັດກອງປະຊຸມຕ່າງໆ: ❶ ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບລັດຖະບານ ທີ່ (ຫໍປະຊຸມແຫ່ງຊາດ); ❷ ກອງປະຊຸມປຶກສາຫາລື ກ່ຽວກັບການຫັນລະບົບການນຳໃຊ້ບັດຮ່ວມກັນລະຫວ່າງ ທະນາຄານທຸລະກິດດ້ວຍກັນໃນ ສປປ ລາວ (Laos ATM Pool switching: LAPS)

ເປັນນິຕິ ບຸກຄົນ ທີ່ (ທຫລ); ❸ ກອງປະຊຸມຄະນະຄົ້ນຄວ້າຮ່າງດຳລັດສູນຂໍ້ມູນຂ່າວສານສິນເຊື່ອ (CIB) ທີ່ (ທຫລ); ❹ ກອງປະຊຸມປຶກສາຫາລື ກ່ຽວກັບບັນຊີກິດຈະການຖືຫຸ້ນຂອງ ສປປ ລາວ ທີ່ (ທຫລ); ❺ ກອງປະຊຸມຄະນະກຳມະການເປີດເສລີທາງດ້ານການເງິນອາຊຽນ ຄັ້ງທີ 55 ໃນລະຫວ່າງວັນທີ 13-15 ສິງຫາ 2017 ທີ່ (ປະເທດອິນໂດເນເຊຍ);

- ຄະນະຜູ້ວ່າການໄດ້ສືບຕໍ່ດຳເນີນການບຳລຸງສາພາຕ່າງປະເທດ ຢູ່ປະເທດສິງກະໂປ (ໄລຍະ 1 ເດືອນ);
- ຕ້ອນຮັບການຢັ້ງມຂໍ່ານັບຄະນະຜູ້ວ່າການ ທຫລ ຂອງທ່ານ Wang Wentian ເອກອັກຄະລັດຖະທູດແຫ່ງ ສປ. ຈີນ, ຄະນະນຳຈາກໂຮງພິມຂອງທະນາຄານແຫ່ງຊາດ ກຳປູເຈຍ, ປະທານຜູ້ບໍລິຫານ ທະນາຄານ Well Fargo ປະຈຳຂົງເຂດອາຊີ-ປາຊີຟິກຄົນໃໝ່ ແລະ ທ່ານ Yue Yi ປະທານອຳນວຍການໃຫຍ່ ທະນາຄານແຫ່ງ ສປ. ຈີນ (ຮອງກົງ).

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- **ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມ:** ❶ ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນສິງຫາ 2017 ທີ່ (ຫສນຍ); ❷ ກອງປະຊຸມປຶກສາຫາລືກ່ຽວກັບວຽກງານການຮ່ວມມືລະຫວ່າງ ທະນາຄານແຫ່ງ ສປປ ລາວ ກັບ ທະນາຄານໂລກ ທີ່ (ທຫລ); ❸ ກອງປະຊຸມສອງຝ່າຍລະຫວ່າງ ທະນາຄານແຫ່ງ ສປປ ລາວ ກັບ ທະນາຄານປະຊາຊົນຈີນ ໃນລະຫວ່າງວັນທີ 22-25 ສິງຫາ 2017 ຢູ່ທີ່ (ປະເທດຈີນ); ❹ ກອງປະຊຸມປຶກສາຫາລື ແລະ ຄົ້ນຄວ້າປະກອບຄຳເຫັນຕໍ່ຮ່າງນະໂຍບາຍສິນເຊື່ອ ເພື່ອສົ່ງເສີມເອັສເອັມອີ (SME) ທີ່ (ທຫລ) ແລະ ❺ ກອງປະຊຸມ ແລະ ສຳມະນາການເປີດກວ້າງໃຫ້ຄວາມຮູ້ກ່ຽວກັບຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ທາງການເງິນ ທີ່ (ນະຄອນຫຼວງວຽງຈັນ); ❻ ກອງປະຊຸມການແກ້ໄຂບັນຫາການຫຼິ້ນຫວຍຂອງພະນັກງານພາຍໃນທະນາຄານແຫ່ງ ສປປ ລາວ ;
- ສືບຕໍ່ຈັດກອງປະຊຸມດຳເນີນຊີວິດການເມືອງປັບປຸງປົວແປງພັກຢູ່ບັນດາຮາກຖານພັກທີ່ຂຶ້ນກັບອົງຄະນະພັກ ທຫລ;
- ຄະນະຜູ້ວ່າການໄດ້ສືບຕໍ່ດຳເນີນການບຳລຸງສາພາຕ່າງປະເທດ ຢູ່ປະເທດສິງກະໂປ (ໄລຍະ 1 ເດືອນ);
- ຕິດຕາມສຳເນົາໜັງສືພິມຜ່ານແດນຂອງ ສະມາຊິກສະພາບໍລິຫານ ທຫລ ແລະ ຄະນະຜູ້ວ່າການ ເພື່ອຕອບຄຳຖາມຕາມຫຼັກການຊອກຮູ້ລູກຄ້າກັບທະນາຄານຄູ່ຄ້າ;

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ